ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ກອງທຶນຫລຸດຜ່ອນຄວາມທຸກຍາກ (ທລຍ)

ເລກທີ 0698/ທລຍ

ນະຄອນຫລວງວຽງຈັນ, ວັນທີ 25 ພຶດສະພາ 2020

# ໜັງສືເຊີນເຂົ້າຮ່ວມປະມູນສົມທຽບລາຄາ

ສຳລັບການຈັດ

ເຄື່ອງແທັບເລັດ (Tablet) ຈຳນວນ 100 ເຄື່ອງ ແລະ ເຄື່ອງສາຍໂປຣແຈັກເຕີ້ (Projector) ຈຳນວນ 10 ເຄື່ອງ

ສັນຍາເລກທີ: PRF.III-AF/Tablet+Projector/G-S/2020 (AF-G-003)

ເຖິງ: ______________________________

1. ລັດຖະບານ ສປປ ລາວ ໄດ້ຮັບທຶນກູ້ຢືມ ຈາກສະມາຄົມພັດທະນາສາກົນ (IDA) ຂອງທະນາຄານໂລກ ແລະ ອົງການເພື່ອການພັດທະນາ ແລະ ການຮ່ວມມື ສະວິດເຊີແລນ (SDC) ເພື່ອຈັດຕັ້ງປະຕິບັດໂຄງການກອງທຶນຫລຸດຜ່ອນຄວາມທຸກຍາກ III - ໄລຍະທຶນເພີ່ມ ແລະ ມີຈຸດປະສົງທີ່ຈະນຳໃຊ້ທຶນສ່ວນໜຶ່ງ ເຂົ້າໃນການຈັດຊື້ເຄື່ອງແທັບເລັດ (Tablet) ຈຳນວນ 100 ເຄື່ອງ ແລະ ເຄື່ອງສາຍໂປເຈັກເຕີ້ (Projector) ຈຳນວນ 10 ເຄື່ອງ, ດ້ວຍການສະເໜີໃຫ້ຍື່ນຊອງປະມູນເພື່ອສົມທຽບລາຄາ.
2. ກອງທຶນຫລຸດຜ່ອນຄວາມທຸກຍາກ ຂໍເຊີນຮ້ານ/ບໍລິສັດຂອງທ່ານ ເຂົ້າຍື່ນຊອງສົມທຽບລາຄາ ສຳລັບການຈັດຊື້ເຄື່ອງດັ່ງກ່າວຂ້າງເທິງ, ໄລຍະເວລາໃນການສົ່ງມອບແມ່ນ 60 ວັນ.
3. ການປະມູນນີ້ ຈະດຳເນີນຕາມຂັ້ນຕອນການປະມູນສົມທຽບລາຄາ ທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳ ກ່ຽວກັບການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ, ສະບັບເລກທີ 0047/ກງ, ລົງວັນທີ 13 ກຸມພາ 2019.
4. ຊອງສະເໜີລາຄາ ຈະຕ້ອງສົ່ງກ່ອນເວລາ 14:00 ໂມງ ຂອງວັນທີ 15/06/2020 ຢູ່ທີ່ຫ້ອງການກອງທຶນຫລຸດຜ່ອນຄວາມທຸກຍາກ, ແລະ ຊອງປະມູນທຸກໆຊອງ ຈະໄດ້ເປີດໃນເວລາ 14:00 ໂມງ, ຂອງວັນທີ 15/06/2020 ຢູ່ທີ່ຫ້ອງການ ທລຍ ຕັ້ງຢູ່ໃນຫ້ອງການລັດຖະບານ, ຖະໜົນ ສີສະຫວາດ, ບ້ານ ນາໄຊ່ດຽວ, ເມືອງ ຈັນທະບູລີ, ນະຄອນຫລວງວຽງຈັນ, ສປປ ລາວ.
5. ທ່ານສາມາດສອບຖາມຂໍ້ມູນເພີ່ມເຕີມ ໄດ້ທີ່ຫ້ອງການ ທລຍ, ຕາມວັນ ແລະ ເວລາເຮັດວຽກ ໂທ: 261479-80 (ຕໍ່ 105).

ກອງທຶນຫລຸດຜ່ອນຄວາມທຸກຍາກ,

ຜູ້ອຳນວຍການບໍລິຫານ ທລຍ

ຈິດ ທະວີໄສ